ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------

ກະຊວງກະສິກຳ ແລະ ປ່າໄມ້

ກົມປູກຝັງ

ເລກທີ 1085 ........./ກປຝ

ນະຄອນຫຼວງວຽງຈັນ, ວັນທີ 13 SEP 2011

## ບົດແນະນຳ

**ເຖິງ:** ທ່ານ ຫົວໜ້າຂະແໜງປູກຝັງແຂວງ ແລະ ນະຄອນຫຼວງ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ມາດຕະການສຸຂານາໄມພືດສຳລັບການນຳເຂົ້າແນວພັນມັນຕົ້ນຈາກຕ່າງປະເທດ

- ອີງຕາມກົດໝາຍ ວ່າດ້ວຍການປ້ອງກັນພືດ ສະບັບ ເລກທີ 06/ສພຊ, ລົງວັນທີ 9/12/2008;
- ອີງຕາມຄຳສັ່ງຂອງລັດຖະມົນຕີ ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ ປ້ອງກັນ ແລະ ສະກັດກັ້ນ ການລະບາດຂອງເພ້ຍແປ້ງມັນຕົ້ນ ເລກທີ 1501/ກປ ນະຄອນຫຼວງວຽງຈັນ, ວັນທີ 23/3/2011
- ອີງຕາມບົດແນະນຳວິຊາການ ກ່ຽວກັບມາດຕະການ ປ້ອງກັນ ແລະ ກຳຈັດ ເພ້ຍແປ້ງມັນຕົ້ນ ສະບັບເລກທີ 0879/ກປຝ ລົງວັນທີ 22/7/2011

ເພື່ອອຳນວຍຄວາມສະດວກໃຫ້ແກ່ການສະໜອງແນວພັນມັນຕົ້ນໂດຍສະເພາະການນຳເຂົ້າຈາກຕ່າງປະເທດ ໃຫ້ມີຄຸນນະພາບ ແລະ ປອດສັດຕູພືດ, ມີຄວາມຈຳເປັນຕ້ອງມີການກຳນົດກົນໄກການນຳເຂົ້າ ແລະ ຄຸ້ມຄອງການສະໜອງແນວພັນມັນຕົ້ນທີ່ເປັນລະບົບຊັດເຈນ ແລະ ໂປ່ງໃສ ໂດຍຜັນຂະຫຍາຍລະບຽບກົດໝາຍກ່ຽວກັບການປ້ອງກັນພືດຂອງ ສປປ. ລາວ ແນໃສ່ສະກັດກັ້ນການຕິດແປດຂອງສັດຕູພືດມານຳທ່ອນພັນ ແລະ ການແຜ່ລະບາດອອກຢ່າງກວ້າງຂວາງພາຍໃນປະເທດຊຶ່ງຈະສ້າງຄວາມເສຍຫາຍຕໍ່ພືດ ເສດຖະກິດ ແລະ ແຫຼ່ງພັນພືດ ອື່ນໆ ທີ່ສຳຄັນ ຢູ່ພາຍໃນປະເທດເຮົາ. ດັ່ງນັ້ນ, ກົມປູກຝັງຈຶ່ງອອກມາດຕະການສຸຂານາໄມພືດສຳລັບການນຳເຂົ້າແນວພັນດັ່ງກ່າວ ຕາມລາຍລະອຽດຕໍ່ໄປນີ້:

**1. ການຂໍອະນຸຍາດນຳເຂົ້າ ແນວພັນມັນຕົ້ນ** (*Manihot esculenta* Crantz):

ຜູ້ນຳເຂົ້າແນວພັນມັນຕົ້ນ ຕ້ອງວາງແຜນການນຳເຂົ້າໄວ້ກ່ອນລ່ວງໜ້າ ເພື່ອກຽມຂໍ້ມູນ ແລະ ຍື່ນສະເໜີຂໍອະນຸຍາດນຳເຂົ້າຕາມເງື່ອນໄຂ ແລະ ຂັ້ນຕອນດັ່ງລຸ່ມນີ້:

**1.1. ເງື່ອນໄຂການຂໍອະນຸຍາດ ແລະ ນຳເຂົ້າແນວພັນມັນຕົ້ນ**

**ກ. ເງື່ອນໄຂການຂໍອະນຸຍາດ**

- ຜູ້ນຳເຂົ້າຕ້ອງຮັບຮູ້ ແລະ ເຂົ້າໃຈ ກ່ຽວກັບເນື້ອໃນຂໍ້ບັງຄັບຂອງກົດໝາຍວ່າດ້ວຍການປ້ອງກັນພືດ
- ແນວພັນມັນຕົ້ນຕ້ອງໄດ້ຮັບການຂຶ້ນທະບຽນ ແນວພັນຢູ່ກົມປູກຝັງ
- ຕ້ອງມີເປົ້າໝາຍນຳເຂົ້າມາຜະລິດສະເພາະພື້ນທີ່ໃດໜຶ່ງຂອງຕົນຫຼືນຳເຂົ້າມາໃຊ້ເອງຕາມທີ່ໄດ້ກຳນົດໃນເອກະສານແຜນການຜະລິດ ຫຼື ການນຳໃຊ້.